

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ..................................01 - 05

**II.** ການເຄື່ອນໄຫວຂອງ ການນຳຂັ້ນສູງ...................................................................06 - 07

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................08 - 11

**IV.** ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ.........................................................12 - 13


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**
**ເດືອນທັນວາ 2025**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດຫວຽດນາມ ຊຸດທີ 15 ໄດ້ອັດລົງໃນວັນທີ 11 ທັນວາ 2025, ພາຍຫຼັງດຳເນີນມາເປັນເວລາ 40 ວັນ ໄດ້ພິຈາລະນາຮັບຮອງເອົາກົດໝາຍ 51 ສະບັບ ແລະ ມະຕິ 39 ສະບັບ ເປັນຕົ້ນ: 1) ກົດໝາຍ ວ່າດ້ວຍຄວາມປອດໄພທາງໄຊເບີ, ເປັນກົດໝາຍທີ່ລວບລວມເອົາ ກົດໝາຍ ວ່າດ້ວຍຄວາມປອດໄພທາງໄຊເບີ ປີ 2018 ແລະ ກົດໝາຍ ວ່າດ້ວຍຄວາມປອດໄພຂໍ້ມູນຂ່າວສານທາງໄຊເບີ ປີ 2015 ລວມເຂົ້າເປັນອັນດຽວ ທີ່ປະກອບມີ 08 ພາກ ແລະ 45 ມາດຕາ ຈະບັງຄັບໃຊ້ໃນວັນທີ 01 ກໍລະກົດ 2026; 2) ກົດໝາຍວ່າດ້ວຍການປົກປ້ອງຄວາມລັບຂອງລັດຖະບານ (ສະບັບໃໝ່) ປະກອບມີ 05 ພາກ ແລະ 28 ມາດຕາ, ຈະມີຜົນບັງຄັບໃຊ້ໃນວັນທີ 01 ມີນາ 2026; 3) ປັບປຸງກົດໝາຍ ວ່າດ້ວຍການປ້ອງກັນປະເທດ ແລະ ຄວາມໝັ້ນຄົງຂອງອຸດສາຫະກຳ ແລະ ການເຄື່ອນໄຫວອຸດສາຫະກຳ ຈະມີຜົນບັງຄັບໃຊ້ໃນວັນທີ 01 ມັງກອນ 2026; 4) ປັບປຸງກົດໝາຍວ່າດ້ວຍສື່ມວນຊົນ, ຈະມີຜົນບັງຄັບໃຊ້ໃນວັນທີ 01 ກໍລະກົດ 2026; 5) ປັບປຸງກົດໝາຍ ວ່າດ້ວຍການສຶກສາ ຈະມີຜົນບັງຄັບໃຊ້ໃນວັນທີ 01 ມັງກອນ 2026 ເປັນຕົ້ນໄປ; 6) ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ຄວບຄຸມຢາເສບຕິດ ສະບັບປັບປຸງ; 7) ກົດໝາຍ ວ່າດ້ວຍການສຶກສາວິຊາຊີບ ສະບັບປັບປຸງ ແລະ ປັບປຸງກົດໝາຍອື່ນໆ ອີກ 24 ສະບັບ. ພ້ອມກັນນັ້ນ, ສະພາແຫ່ງຊາດ ຍັງໄດ້ຮັບຮອງມະຕິ ກ່ຽວກັບກົນໄກ, ນະໂຍບາຍພິເສດ ແລະ ຍົກເວັ້ນສຳລັບການພັດທະນາການສຶກສາ ແລະ ການຝຶກອົບຮົມທີ່ກ້າວໜ້າ, ມະຕິອະນຸມັດນະໂຍບາຍການລົງທຶນສຳລັບໂຄງການເປົ້າໝາຍແຫ່ງຊາດ ກ່ຽວກັບການຫັນເປັນທັນສະໄໝ ແລະ ການປັບປຸງຄຸນນະພາບການສຶກສາ ແລະ ການຝຶກອົບຮົມ ສຳລັບໄລຍະ 2026-2035.

ກອງປະຊຸມຄົບຄະນະ ຄັ້ງທີ 15 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XIII ລະຫວ່າງວັນທີ 23-24 ທັນວາ 2025 ໄດ້ໄຂຂຶ້ນພາຍໃຕ້ການເປັນປະທານຂອງ ສະຫາຍ ເລຂາທິການໃຫຍ່ ໂຕ ເລີມ, ມີການນຳຂັ້ນສູງພັກ-ລັດ ເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ ໂຕ ເລີມ ໄດ້ເນັ້ນໜັກວ່າ ຄະນະບໍລິຫານງານສູນກາງພັກ ເອກະພາບຕໍ່ຜົນງານອັນຍິ່ງໃຫຍ່ ແລະ ມີຄວາມ ໝາຍປະຫວັດສາດ ທີ່ຍາດມາໄດ້ຕະຫຼອດໄລຍະເກືອບໜຶ່ງສັດຕະວັດ ພາຍໃຕ້ການນຳພາຂອງພັກ, ການຈັດຕັ້ງປະຕິບັດໂຄງການການເມືອງ ປີ 1991 ແລະ ສະບັບປັບປຸງເພີ່ມເຕີມ ປີ 2011 ໄດ້ຢັ້ງຢືນຄືນເຖິງຄວາມຖືກຕ້ອງ, ມີຫົວຄິດປະດິດສ້າງ ແລະ ຄວາມສອດຄ່ອງ ຂອງເສັ້ນທາງປ່ຽນແປງໃໝ່(ໂດ່ຍເມີຍ) ຂອງພັກ. ນອກນັ້ນ, ຄະນະບໍລິຫານງານສູນກາງພັກ ໄດ້ກຳນົດບາງບາດກ້າວບຸກທະລຸຍຸດທະສາດ ສຳລັບໄລຍະການປະຕິວັດໃໝ່ ໃນການປະຕິຮູບຢ່າງແຂງແຮງທາງດ້ານຂອບນິຕິກຳ ແລະ ສະຖາບັນເພື່ອການພັດທະນາ; ການເພີ່ມການແບ່ງຂັ້ນຄຸ້ມຄອງ ແລະ ມອບສິດອຳນາດ; ການບຸກທະລຸທາງດ້ານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ການຫັນເປັນດິຈິຕອນ; ການພັດທະນາກຳລັງການຜະລິດ ແລະ ຮູບແບບທຸລະກິດໃໝ່. ພ້ອມດຽວກັນ ຍັງໃຫ້ບູລິມະສິດແກ່ການປັບປຸງໂຄງສ້າງ ແລະ ຍົກສູງຄຸນນະພາບຊັບພະຍາກອນມະນຸດ; ພັດທະນາແຮງງານຄຸນນະພາບສູງ; ປະຕິຮູບວຽກງານພະນັກງານຢ່າງແຂງແຮງ, ພ້ອມທັງສົ່ງເສີມ ແລະ ປົກປ້ອງພະນັກງານທີ່ມີຄວາມຫ້າວຫັນ, ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ ເພື່ອຜົນປະໂຫຍດສ່ວນລວມ. ໂຄງລ່າງພື້ນຖານເສດຖະກິດ-ສັງຄົມ, ໂດຍສະເພາະຄົມມະນາຄົມ, ເຕັກໂນໂລຊີ ແລະ ພະລັງງານ ຈະສືບຕໍ່ໄດ້ຮັບການກໍ່ສ້າງໃຫ້ສົມບູນ ແລະ ສົ່ງເສີມ ຄຽງຄູ່ກັບຄວາມພະຍາຍາມໃນການຈັດຕັ້ງປະຕິບັດວຽກງານສຳຄັນອື່ນໆ. ຄະນະບໍລິຫານງານສູນກາງພັກ ຍັງໄດ້ຮັບຮອງເອົາບົດລາຍງານ ກ່ຽວກັບວຽກງານບຸກຄະລາກອນ ແລະ ໄດ້ລົງມະຕິດ້ວຍຄະແນນສຽງ ເຫັນດີຮັບຮອງເອົາລາຍຊື່ບຸກຄະລາກອນທີ່ໄດ້ຮັບການສະເໜີເຂົ້າໃນກອງປະຊຸມຄະນະບໍລິຫານງານສູນກາງພັກ ສະໄໝທີ XIV, ພິຈາລະນາ, ຕົກລົງ ແລະ ເລືອກຕັ້ງຕາມກົດລະບຽບຂອງພັກ.

### 2) ພັກກອມມູນິດຈີນ

ກອງປະຊຸມວຽກງານເສດຖະກິດຂັ້ນສູນກາງຂອງຈີນ ໄດ້ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ລະຫວ່າງວັນທີ 10-11 ທັນວາ 2025 ໂດຍການເປັນປະທານຂອງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ ແລະ ກ່າວຄຳປາໄສເນັ້ນໜັກໃນກອງປະຊຸມວ່າ: ວຽກງານເສດຖະກິດປີ 2026 ຕ້ອງປະຕິບັດໜ້າທີ່ສຳຄັນໃຫ້ດີ ດັ່ງນີ້: 1) ຍຶດໝັ້ນຄວາມຕ້ອງການພາຍໃນເປັນຕົ້ນຕໍ ແລະ ສ້າງຕະຫຼາດພາຍໃນຢ່າງເຂັ້ມແຂງ; 2) ຍຶດໝັ້ນການພັດທະນາ ທີ່ຂັບເຄື່ອນດ້ວຍການປະດິດສ້າງໃໝ່, ເລັ່ງລັດການບົ່ມເພາະສ້າງ ແລະ ຂະຫຍາຍແຮງຂັບເຄື່ອນການເຕີບ

ໃຫຍ່ໃໝ່; 3) ຍຶດໝັ້ນການປະຕິຮູບເພື່ອແກ້ໄຂບັນຫາຂໍ້ຫຍຸ້ງຍາກ, ເພີ່ມກຳລັງແຮງ ແລະ ພະລັງຊີວິດຂອງການພັດທະນາທີ່ມີຄຸນນະພາບສູງ; 4) ຍຶດໝັ້ນການເປີດປະຕູສູ່ພາຍນອກ, ຊຸກຍູ້ການຮ່ວມມືທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດໃນຫຼາຍຂົງເຂດ; 5) ຍຶດໝັ້ນການພັດທະນາທີ່ປະສານງານກັນ, ຊຸກຍູ້ການເຊື່ອມໂຍງເຂົ້າກັນ ລະຫວ່າງຕົວເມືອງ-ຊົນນະບົດ ແລະ ການເຊື່ອມໂຍງໃນລະດັບພາກພື້ນ; 6) ຍຶດໝັ້ນການນຳພາໂດຍ "ການຫຼຸດຜ່ອນການປ່ອຍອາຍກາກບອນ ແລະ ມົນລະພິດ", ຊຸກຍູ້ການຫັນປ່ຽນໄປຕາມທິດສີຂຽວຢ່າງຮອບດ້ານ; 7) ຍຶດໝັ້ນໃຫ້ຄວາມສຳຄັນກັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ພະຍາຍາມເຮັດໃນສິ່ງທີ່ເປັນປະໂຫຍດແກ່ປະຊາຊົນໃຫ້ຫຼາຍກວ່າເກົ່າ; 8) ຍຶດໝັ້ນຮັກສາພື້ນຖານຢ່າງໜັກແໜ້ນ, ແກ້ໄຂຄວາມສ່ຽງໃນຂົງເຂດສຳຄັນຢ່າງຕັ້ງໜ້າ ແລະ ໝັ້ນຄົງຢ່າງສົມເຫດສົມຜົນ.

**3) ພັກແຮງງານເກົາຫຼີ**

ລະຫວ່າງວັນທີ 09-11 ທັນວາ 2025, ພັກແຮງງານເກົາຫຼີ ໄດ້ຈັດກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 13 ສະໄໝທີ VIII ໂດຍການເປັນປະທານ ຂອງ ສະຫາຍ ກິມ ເຈິງ ອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ ແລະ ມີບັນດາການນຳຂັ້ນສູງຂອງພັກ-ລັດ ເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມ ໄດ້ປຶກສາຫາລືບັນຫາສຳຄັນ ຄື: 1) ກວດກາຄືນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດໃນປີ 2025; 2) ວຽກງານຂອງຄະນະກວດກາສູນກາງພັກ ໃນປີ 2025; 3) ການກະກຽມໃຫ້ແກ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ; 4) ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2025 ແລະ ຮ່າງງົບປະມານແຫ່ງລັດປີ 2026 ແລະ ການປັບປຸງກົງຈັກການຈັດຕັ້ງ.

**4) ພັກກອມມູນິດກູບາ**

ວັນທີ 18-19 ທັນວາ 2025, ກອງປະຊຸມສະໄໝສາມັນ ຄັ້ງທີ VI ຂອງສະພາແຫ່ງຊາດອຳນາດປະຊາຊົນກູບາ ຊຸດທີ 10 ໄດ້ໄຂຂຶ້ນຢ່າງເປັນທາງການ ຜ່ານວິດີໂອທາງໄກ ໂດຍການເປັນປະທານຂອງ ສະຫາຍ Esteban Lazo Hernández, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດອຳນາດປະຊາຊົນ ແລະ ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີ່ໜຶ່ງຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສ.ກູບາ; ມີບັນດາຜູ້ນຳຂັ້ນສູງ, ບັນດາສະມາຊິກສະພາແຫ່ງຊາດ ແລະ ແຂກຖືກເຊີນ ເຂົ້າຮ່ວມ. ກອງປະຊຸມ ໄດ້ຮັບຟັງບົດລາຍງານຂອງ ປະທານສະພາແຫ່ງຊາດອຳນາດປະຊາຊົນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2025 ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2026. ກອງປະຊຸມຄັ້ງນີ້ ໄດ້ເລືອກເອົາສະມາຊິກສະພາ 08 ບ່ອນນັ່ງເພື່ອປະກອບໃສ່ບ່ອນນັ່ງວ່າງ (ອອກຮັບອຸດໜູນບຳນານ), ສະພາມີທັງໝົດ 470 ບ່ອນນັ່ງ, ເພດຍິງກວມເອົາ 57,4%.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ບັນຫາຊາຍແດນ ລະຫວ່າງ ໄທ ແລະ ກຳປູເຈຍ:** ການປະທະກັນລະຫວ່າງໄທ ແລະ ກຳປູເຈຍ ຍັງສືບຕໍ່ ພາຍຫຼັງທີ່ການປະທະກັນຄັ້ງໃໝ່ເກີດຂຶ້ນຕັ້ງແຕ່ໄລຍະກາງເດືອນພະຈິກ 2025 ເປັນຕົ້ນມາ, ໂດຍມີການປະທະກັນຢູ່ແຂວງສີສະເກດ, ສຸຣິນ ຂອງໄທ ແລະ ແຂວງ ບັດຕຳບອງ ທາງພາກຕາເວັນຕົກສຽງເໜືອ ຂອງກຳປູເຈຍ, ສອງຝ່າຍ ນຳໃຊ້ລູກສອນໄຟ BM-21, ປືນໃຫຍ່, ການຍິງຈາກລົດຖັງ ແລະ ໂດຣນ ໂຈມຕີຕອບໂຕ້ກັນໄປມາ. ໃນວັນທີ 22 ທັນວາ 2025, ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນສະໄໝພິເສດ ໄດ້ຈັດຂຶ້ນເພື່ອຫາລື ກ່ຽວກັບສະພາບການປັດຈຸບັນ ລະຫວ່າງ ກຳປູເຈຍ ແລະ ໄທ ໂດຍການເປັນປະທານຂອງ ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ມາເລເຊຍ ໃນນາມປະທານອາຊຽນ ປີ 2025, ກອງປະຊຸມ ໄດ້ຮັບຟັງລາຍງານ ກ່ຽວກັບການປະຕິບັດໜ້າທີ່ໃນໄລຍະຜ່ານມາ ຂອງ ໜ່ວຍງານສັງ ເກດການອາຊຽນ, ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນຕຸລາ 2025, ພ້ອມທັງຮັບຟັງການແຈ້ງສະພາບການປັດຈຸບັນທາງດ້ານຊາຍແດນ ໂດຍລັດຖະມົນຕີກະຊວງການຕ່າງປະເທດ ແລະ ການຮ່ວມມືສາກົນຂອງກຳປູເຈຍ ແລະ ລັດຖະ ມົນຕີກະຊວງການຕ່າງປະເທດຂອງໄທ. ກອງປະຊຸມດັ່ງກ່າວ ໄດ້ສະແດງຄວາມເປັນຫ່ວງຕໍ່ສະພາບການໃນປັດຈຸບັນ ແລະ ຮຽກຮ້ອງໃຫ້ທັງສອງຝ່າຍ ແກ້ໄຂບັນຫາດ້ວຍສັນຕິວິທີ ໂດຍສອດຄ່ອງກັບກົດບັດອົງການສະຫະປະຊາຊາດ, ກົດບັດອາຊຽນ, ສົນທິສັນຍາໄມຕີຈິດ ແລະ ການຮ່ວມມືໃນອາຊີ ຕາເວັນອອກສ່ຽງໃຕ້. ສ່ວນລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ໄດ້ຢ້ຳຄືນນະໂຍບາຍການຕ່າງປະເທດ ອັນສະເໝີຕົ້ນສະເໝີປາຍຂອງ ສປປ ລາວ ໃນການຮັດແໜ້ນການພົວພັນຮ່ວມມືກັບປະເທດຕ່າງໆ, ລວມທັງ ກຳປູເຈຍ ແລະ ໄທ.

ພ້ອມນັ້ນ, ກໍໄດ້ຮຽກຮ້ອງໃຫ້ທັງສອງຝ່າຍໃຊ້ຄວາມອົດທົນອົດກັ້ນ ຫຼີກເວັ້ນການໃຊ້ກຳລັງ ບົນຈິດໃຈໄມຕີຈິດມິດຕະພາບ ໃນຖານະເປັນປະເທດສະມາຊິກອາຊຽນດ້ວຍກັນ, ກັບຄືນປະຕິບັດຕາມຂໍ້ຕົກລົງເພື່ອສັນຕິພາບ ທີ່ສອງປະເທດໄດ້ລົງນາມ ໃນວັນທີ 26 ຕຸລາ 2025 ທີ່ກົວລາລຳເປີ ແລະ ນຳໃຊ້ກົນໄກທີ່ມີຢູ່ ເພື່ອຊອກຫາຊ່ອງທາງແກ້ໄຂບັນຫາດ້ວຍສັນຕິວິທີ.

ວັນທີ 24 ທັນວາ 2025, ກຳປູເຈຍ ແລະ ໄທ ໄດ້ຈັດກອງປະຊຸມຄະນະກຳມະການຊາຍແດນທົ່ວໄປ (GBC) ຂຶ້ນທີ່ແຂວງ ຈັນທະບຸລີ ຂອງໄທ ຫຼັງຈາກການເຈລະຈາຕໍ່ເນື່ອງ, ສອງຝ່າຍ ໄດ້ລົງນາມໃນຖະແຫຼງການຮ່ວມ (Joint Statement) ໂດຍມີເນື້ອໃນສຳຄັນ: ໃຫ້ສອງຝ່າຍ ຢຸດຍິງທັນທີ ເລີ່ມແຕ່ເວລາ 12:00 ໂມງ ຂອງວັນທີ 27 ທັນວາ 2025; ຢຸດການເຄື່ອນຍ້າຍທາງທະຫານທຸກຊະນິດ ແລະ ຫ້າມການບຸກລຸກທາງອາກາດ; ອະນຸຍາດໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ໄດ້ກັບຄືນສູ່ທີ່ຢູ່ອາໄສຂອງຕົນ; ຮ່ວມມືກັນໃນວຽກງານເກັບກູ້ລະເບີດເພື່ອມະນຸດສະທຳ ພ້ອມດຽວກັນນັ້ນ, ຝ່າຍໄທ ຈະສົ່ງທະຫານກຳປູເຈຍ ຈຳນວນ 18 ຄົນ ທີ່ຖືກຈັບຕົວ ກັບຄືນປະເທດພາຍໃນ 72 ຊົ່ວໂມງ ຫຼັງຈາກການຢຸດຍິງປະກາດໃຊ້ ແລະ ສະຖານະການສະຫງົບລົງ.

**ການພົວພັນ ລະຫວ່າງ ອິນເດຍ-ຣັດເຊຍ:** ທ່ານ ວະລາດິເມຍ ປູຕິນ, ປະທານາທິບໍດີຣັດເຊຍ, ໄດ້ຢ້ຽມຢາມອິນເດຍ ໃນລະຫວ່າງວັນທີ 04-05 ທັນວາ 2025 ທ່າມກາງວາລະຄົບຮອບ 25 ປີ ແຫ່ງການເປັນຄູ່ຮ່ວມມືຍຸດທະສາດ ລະຫວ່າງ ຣັດເຊຍ-ອິນເດຍ ແລະ ສະຖານະການທີ່ ອິນເດຍ ຖືກກົດດັນ ຈາກ ສ.ອາເມຣິກາ ເລື່ອງການນຳເຂົ້ານ້ຳມັນຈາກ ຣັດເຊຍ. ທ່ານ ປູຕິນ ແລະ ທ່ານ ນາເຣນດຣາ ໂມດີ, ນາຍົກລັດຖະມົນຕີອິນເດຍ ໄດ້ຕົກລົງເຫັນດີສືບຕໍ່ເພີ່ມທະວີຄວາມຮ່ວມມື ດ້ານພະລັງງານ ແລະ ການປ້ອງກັນປະເທດ, ຊຶ່ງຣັດເຊຍ ຢືນຢັນ ຈະຄ້າຂາຍນ້ຳມັນ, ອາຍແກັສ ແລະ ຖ່ານຫີນ ໃຫ້ອິນເດຍ ຢ່າງຕໍ່ເນື່ອງ ເພື່ອຄວາມໝັ້ນຄົງທາງພະລັງງານ ສ່ວນດ້ານການທະຫານ ຈະສືບຕໍ່ໃຫ້ຄວາມຮ່ວມມື ໂດຍຈະເນັ້ນການຖ່າຍທອດເຕັກໂນໂລຊີ ແລະ ສ້າງບໍລິສັດຮ່ວມທຶນ ເພື່ອຜະລິດອາວຸດຣັດເຊຍໃນອິນເດຍ; ຍັງຈະມີການຮ່ວມມືດ້ານເຕັກໂນໂລຊີ ແລະ ນະວັດຕະກຳ ຕື່ມອີກ. ສອງຝ່າຍ ໄດ້ຕັ້ງເປົ້າໝາຍ ຈະເພີ່ມມູນຄ່າການຄ້າສອງຝ່າຍ ຕໍ່ປີ ໃຫ້ສູງເຖິງ 100 ຕື້ໂດລາສະຫະລັດ ຕັ້ງແຕ່ 2030 ເປັນຕົ້ນໄປ ແລະ ຈະຂະຫຍາຍການຊຳລະເງິນ ດ້ວຍສະກຸນເງິນປະຈຳຊາດຂອງຕົນ, ການພັດທະນາເສັ້ນທາງຂົນສົ່ງໃໝ່ (ເສັ້ນທາງເໜືອ-ໃຕ້) ເພື່ອຫຼຸດຜ່ອນການເພິ່ງພາລະບົບຂົນສົ່ງຂອງຕາເວັນຕົກ. ມີການລົງນາມໃນຂໍ້ຕົກລົງ (MOU) 16 ສະບັບ ກວມເອົາຫຼາຍຂົງເຂດ ເຊັ່ນ: ການຄ້າ, ການລົງທຶນ, ສາທາລະນະສຸກ, ການສຶກສາ ແລະ ສື່ມວນຊົນ.

**ການພົວພັນ ລະຫວ່າງ ຈີນ-ຝຣັ່ງ:** ໃນວັນທີ 03-05 ທັນວາ 2025, ທ່ານ ເອັມມານູເອວມາຄຣົງ, ປະທານາທິບໍດີຝຣັ່ງ ໄດ້ຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ ຕາມການເຊື້ອເຊີນຂອງ ສະຫາຍ ສີ ຈິ້ນຜິງ, ປະທານປະເທດແຫ່ງ ສປ ຈີນ, ຊຶ່ງເປັນການຢ້ຽມຢາມ ຄັ້ງທີ 04 ຂອງ ທ່ານ ມາຄຣົງ ນັບແຕ່ເຂົ້າຮັບຕຳແໜ່ງ ໃນປີ 2017 ເປັນຕົ້ນມາ, ຖືເປັນການສືບຕໍ່ວາງຮາກຖານອັນສຳຄັນ ແລະ ໜັກແໜ້ນທາງດ້ານຍຸດທະສາດ ໃຫ້ແກ່ການສົ່ງເສີມ ແລະ ຮັດແໜ້ນການພົວພັນຮ່ວມມື ຈີນ-ຝຣັ່ງ. ສອງຝ່າຍ ໄດ້ລົງນາມໃນບັນດາຂໍ້ຕົກລົງວ່າດ້ວຍການຮ່ວມມື ເຊັ່ນ: ດ້ານເສດຖະກິດ, ການຄ້າ, ການລົງທຶນ, ເຕັກໂນໂລຊີ, ພະລັງງານ, ວັດທະນະທຳ-ສັງຄົມ, ການເມືອງ ແລະ ດ້ານອື່ນໆ. ການລົງນາມດັ່ງກ່າວ ສະແດງໃຫ້ເຫັນວ່າ ຝຣັ່ງ ແລະ ບັນດາປະເທດຕາເວັນຕົກ ຫັນມາເພີ່ມທະວີການພົວພັນຮ່ວມມືໃນດ້ານຕ່າງໆ ກັບ ສປ ຈີນ ຫຼາຍຂຶ້ນ ໂດຍສະເພາະ ດ້ານເສດຖະກິດ ທ່າມກາງການຂຶ້ນພາສີດ້ານການຄ້າຂອງ ສ. ອາເມຣິກາ ທີ່ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາ ແລະ ຂະຫຍາຍຕົວທາງດ້ານເສດຖະກິດຂອງບັນດາປະເທດຕ່າງໆໃນໂລກ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ອູແກຣນ ແລະ ຣັດເຊຍ ສືບຕໍ່ໂຈມຕີກັນໄປມາ ໂດຍ ຣັດເຊຍ ໄດ້ຍົກລະດັບການໂຈມຕີດ້ວຍລູກສອນໄຟ ແລະ ໂດຣນ ຈຳນວນຫຼາຍ ເຂົ້າໂຈມຕີໃສ່ນະຄອນຫຼວງ ກີແອບ (Kyiv) ແລະ ເມືອງທ່າເຮືອ ໂອເດດຊາ (Odesa) ເປົ້າໝາຍແມ່ນລະບົບໄຟຟ້າ ແລະ ໂຄງລ່າງພື້ນຖານ ເພື່ອສ້າງຄວາມກົດດັນໃນຊ່ວງລະດູໜາວ ເຮັດໃຫ້ຫຼາຍພື້ນທີ່ເກີດໄຟຟ້າດັບ. ສ່ວນ ອູແກຣນ ໄດ້ເລີ່ມໃຊ້ການໂຈມຕີໄລຍະໄກ ໂດຍໃຊ້ລູກສອນໄຟ ATACMS ແລະ Storm Shadow ໂຈມຕີໃສ່ສູນບັນຊາການທາງທະຫານ ໃນເຂດຊາຍແດນຣັດເຊຍ ເຊັ່ນ: ເຂດບຣີຢານສ໌ (Bryansk) ແລະ ຄູສ໌ກ (Kursk). ຂະນະດຽວກັນ, ການສູ້ຮົບທາງພາກພື້ນດິນ, ກອງທັບຣັດເຊຍ ສືບຕໍ່ບຸກໜັກ ຢູ່ ເຂດໂປຄຣອຟສກ໌ (Pokrovsk) ແລະ ຄູຣາໂຄວ (Kurakhove) ໃນແຂວງ

ໂດເນັດສ໌ກ (Donetsk) ໂດຍພະຍາຍາມຍຶດຈຸດຍຸດທະສາດທີ່ສຳຄັນ. ສ່ວນ ທ່ານ ວະລາດີເມຍ ເຊເລນສະກີ, ປະທານາທິບໍດີອູແກຣນ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳເອີຣົບ ແລະ ອົງການນາໂຕ ທີ່ທຳນຽບນາຍົກລັດຖະມົນຕີອັງກິດ ໃນວັນທີ 09 ທັນວາ 2025 ຊຶ່ງຖືເປັນການປະຊຸມ ເພື່ອສະໜັບສະໜູນ ອູແກຣນ ແລະ ກົດດັນ ສ.ອາເມຣິກາ ບໍ່ໃຫ້ສະໜັບສະໜູນ ຂໍ້ຕົກລົງສັນຕິພາບ ທີ່ບີບບັງຄັບໃຫ້ ອູແກຣນ ຕ້ອງຍົກດິນແດນໃຫ້ແກ່ ຣັດເຊຍ. ກ່ອນໜ້ານີ້ ທ່ານ ເຊເລນສະກີ ແລະ ຜູ້ນຳເອີຣົບ ໄດ້ປະຕິເສດແຜນສັນຕິພາບ 28 ຂໍ້ ຂອງ ສ.ອາເມຣິກາ ທີ່ພາຍຫຼັງໄດ້ປັບລົງເຫຼືອ 20 ຂໍ້ ເນື່ອງຈາກເປັນແຜນທີ່ເອື້ອຜົນປະໂຫຍດຕໍ່ ຣັດເຊຍ ຫຼາຍເກີນໄປ.

ໃນວັນທີ 15 ທັນວາ 2025, ກອງປະຊຸມ ເພື່ອສ້າງສັນຕິພາບໃນອູແກຣນ ທີ່ມີການເຂົ້າຮ່ວມຂອງບັນດາປະເທດເອີຣົບ ແລະ ອາເມຣິກາ ທີ່ຈັດຂຶ້ນໃນນະຄອນຫຼວງແບັກແລງ, ເຢຍລະມັນ; ສ.ອາເມຣິກາ ໄດ້ສະເໜີການຮັບປະກັນຄວາມໝັ້ນຄົງໃຫ້ແກ່ ອູແກຣນ ທີ່ຄ້າຍຄືກັບມາດຕາ 05 ຂອງນາໂຕ້ (ທີ່ລະບຸວ່າ ເມື່ອມີປະເທດສະມາຊິກນາໂຕ້ຖືກໂຈມຕີ, ປະເທດອື່ນໆ ໃນກຸ່ມນາໂຕ້ ຈະຕ້ອງຮ່ວມມືກັນ ເພື່ອຊ່ວຍເຫຼືອປະເທດດັ່ງກ່າວ). ນອກນີ້, ກອງປະຊຸມຍັງໄດ້ປຶກສາຫາລື ກ່ຽວກັບ ຂໍ້ຕົກລົງຄວາມໝັ້ນຄົງສຳລັບອູແກຣນ ຕ້ອງປະກອບມີການສ້າງກຳລັງທີ່ນຳພາໂດຍເອີຣົບ (European-led multi-national force) ເພື່ອຊ່ວຍສ້າງຄວາມໝັ້ນຄົງແກ່ ອູແກຣນ, ເຖິງແມ່ນວ່າ ຣັດເຊຍ ຈະຍັງບໍ່ທັນຍອມຮັບວິທີການດັ່ງກ່າວ ຢ່າງເຕັມສ່ວນກໍຕາມ.

**ການເມືອງ ສ.ອາເມຣິກາ:** ວັນທີ 02 ທັນວາ 2025, ລັດຖະບານ ສ.ອາເມຣິກາ ພາຍໃຕ້ການນຳພາຂອງ ທ່ານ ໂດນັນ ທຣຳ ໄດ້ອອກຄຳສັ່ງຢ່າງເປັນທາງການ ໃນການໂຈະ ຫຼື ຢຸດຕິການພິຈາລະນາຄຳຮ້ອງຂໍຄືນເຂົ້າເມືອງທຸກປະເພດຊົ່ວຄາວ ລວມທັງວີຊາຖາວອນ, ການຂໍສັນຊາດ, ວີຊາຄູ່ໝັ້ນ ແລະ ການຂໍລີ້ໄພ ຈາກ 19 ປະເທດ ທີ່ຖືກຈັດຢູ່ໃນກຸ່ມມີຄວາມສ່ຽງສູງຕໍ່ຄວາມໝັ້ນຄົງຂອງອາເມຣິກາ. ເຖິງແມ່ນວ່າ ຈະອາໄສຢູ່ໃນ ສ.ອາເມຣິກາ ແລ້ວ ຫຼື ຜ່ານການສຳພາດ ແຕ່ຢູ່ໃນຂັ້ນຕອນການລໍຖ້າອະນຸມັດຂັ້ນສຸດທ້າຍ ຂະບວນການທັງໝົດຈະຖືກໂຈະໄວ້ກ່ອນ.

ລາຍຊື່ 19 ປະເທດທີ່ຖືກຜົນກະທົບ, ປະເທດ ລາວ ແມ່ນໜຶ່ງໃນບັນຊີລາຍຊື່ດັ່ງກ່າວ:

- **ອາຊີ:** ລາວ, ມຽນມາ, ອາຟະການິດສະຖານ, ອີຣານ, ເຢເມນ ແລະ ຕວັກເມນິດສະຖານ;
- **ອາຟຣິກາ**: ຊາດ, ກົງໂກ, ກີເນີ, ເອຣິເຕຣຍ, ລີບີ, ໂຊມາລີ, ຊູດັງ, ບູຣຸນດີ, ເຊຍຣາເລອອນ ແລະ ໂຕໂກ;
- **ອາເມຣິກາລາຕິນ ແລະ ຄາຣິບຽນ:** ກູບາ, ໄຮຕິ ແລະ ເວເນຊູເອລາ.

**ຄວາມຂັດແຍ່ງ ລະຫວ່າງ ສ.ອາເມຣິກາ ແລະ ເວເນຊູເອລາ:** ໃນວັນທີ 20 ທັນວາ 2025, ກອງກຳລັງພິເສດ ສ.ອາເມຣິກາ ໄດ້ບຸກຂຶ້ນເທິງເຮືອ "Centuries'' ຊຶ່ງຕິດທຸງຊາດປານາມາ ໃນຂະນະທີ່ ກຳລັງເດີນເຮືອຢູ່ເຂດນ່ານນ້ຳສາກົນ ໃກ້ກັບດອນ Barbados. ເຮືອລຳດັ່ງກ່າວ ໄດ້ບັນທຸກນ້ຳມັນດິບ ປະມານ 1,8 ລ້ານບາເຣວ ກຳລັງມຸ່ງໜ້າໄປຍັງປະເທດຈີນ ຊຶ່ງ ສ. ອາເມຣິກາ ອ້າງວ່າ ຈະຕິດຕາມ ແລະ ຢຸດການລັກລອບຂົນສົ່ງນ້ຳມັນທີ່ຜິດກົດໝາຍ ຊຶ່ງຖືກນຳໄປໃຊ້ເປັນທຶນໃຫ້ແກ່ກຸ່ມກໍ່ການຮ້າຍຢາເສບຕິດໃນພາກພື້ນນີ້. ຂະນະທີ່ ລັດຖະບານເວເນຊູເອລາ ໄດ້ອອກຖະແຫຼງການ ປະນາມການກະທຳດັ່ງກ່າວວ່າ ເປັນພຶດຕິກຳແບບ "ໂຈນສະຫຼັດສາກົນ'' ທີ່ປຸ້ນສະດົມຊັບພະຍາກອນຂອງຊາດ ແລະ ກັກຂັງລູກເຮືອໂດຍຜິດກົດໝາຍ. ເວເນຊູເອລາ ຍັງໄດ້ຍື່ນເອກະສານຮຽກຮ້ອງຕໍ່ສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດ (UNSC) ແລະ ອົງການສາກົນອື່ນໆ ເພື່ອຮຽກຮ້ອງຄວາມເປັນທຳ. ໃນໄລຍະທີ່ຜ່ານມາ, ສ.ອາເມຣິກາ ໄດ້ເພີ່ມກຳລັງ ທະຫານໃນທະເລຄາຣິບຽນຢ່າງຕໍ່ເນື່ອງ ໂດຍມີລາຍງານການໂຈມຕີເຮືອທີ່ຖືກສົງໄສວ່າຂົນສົ່ງຢາເສບຕິດ ຊຶ່ງເຮັດໃຫ້ ມີຜູ້ເສຍຊີວິດແລ້ວເກືອບ 100 ຄົນ.

### 4. ພາກພື້ນຕາເວັນອອກກາງ

**ຄວາມຂັດແຍ່ງເຂດກາຊາ**: ເຖິງວ່າ ຈະຢູ່ໃນໄລຍະຂໍ້ຕົກລົງຢຸດຍິງ, ແຕ່ຍັງມີການປະທະກັນເກີດຂຶ້ນເລື້ອຍໆ ໃນວັນທີ 13 ທັນວາ 2025, ອິດສະຣາແອນ ໄດ້ດຳເນີນການໂຈມຕີທາງອາກາດເຂົ້າໃສ່ເປົ້າໝາຍ ແລະ ສາມາດສັງຫານທ່ານ ລາເອັດ ຊາດ (Raed Saad), ຫົວໜ້າຝ່າຍຜະລິດອາວຸດຂອງ ກຸ່ມຮາມາສ. ມີຜູ້ເສຍຊີວິດອື່ນອີກ 04 ຄົນ ແລະ ບາດເຈັບ 06 ຄົນ. ຊຶ່ງກຸ່ມຮາມາສ ໄດ້ກ່າວວ່າ ເຫດການຄັ້ງນີ້ ເປັນການລະເມີດຂໍ້ຕົກລົງຢຸດຍິງຢ່າງຮ້າຍແຮງ ແລະ ອາດຈະສົ່ງຜົນກະທົບຕໍ່ການເຈລະຈາ. ສ່ວນອິດສະຣາແອນ ຢືນຢັນວ່າ ການປະຕິບັດການຄັ້ງດັ່ງກ່າວ ບໍ່ໄດ້ລະເມີດຂໍ້ຕົກລົງ ເພາະເປົ້າໝາຍ ແມ່ນຜູ້ທີ່ກຳລັງເຄື່ອນໄຫວກໍ່ການຮ້າຍ. ໃນຂະນະທີ່, ຄວາມຄືບໜ້າຂອງ ແຜນສັນຕິພາບ ເພື່ອກ້າວໄປສູ່ແຜນສັນຕິພາບໄລຍະທີ 02 ທີ່ ສ.ອາເມຣິກາ ເປັນຜູ້ໄກ່ເກ່ຍ ຍັງບໍ່ມີຄວາມຄືບໜ້າ ເນື່ອງຈາກທັງສອງຝ່າຍຕ່າງກໍບໍ່ຍອມຮັບຈຸດຢືນ ເຊິ່ງກັນ ແລະ ກັນ. ໃນປັດຈຸບັນ ປະຊາຊົນໃນເຂດກາຊາ ສືບຕໍ່ໄດ້ຜົນກະທົບຈາກສົງຄາມທີ່

ແກ່ຍາວ ແລະ ໄພທຳມະຊາດ ຈາກພາຍຸ "Byron" ຈຶ່ງເຮັດໃຫ້ຝົນຕົກໜັກ ແລະ ລົມແຮງ ສິ່ງຜົນເຮັດໃຫ້ເຮືອນ, ອາຄານ ທີ່ເສຍຫາຍຈາກສົງຄາມຢູ່ແລ້ວ ພັງທະລາຍໃນທົ່ວເຂດກາຊາ, ພົນລະເຮືອນປະເຊີນກັບຄວາມ ໜາວ, ຂາດແຄນອາຫານ ແລະ ບໍ່ມີບ່ອນຢູ່ອາໄສ. ນັບແຕ່ເກີດຄວາມຂັດແຍ່ງໃນເດືອນຕຸລາ 2023 ເປັນຕົ້ນມາ ມີຊາວປາແລັດສະຕິນ ເສຍຊີວິດປະມານ 71,000 ຄົນ ແລະ ຫຼາຍກວ່າ 171,000 ຄົນ ໄດ້ຮັບບາດເຈັບ ຈາກການໂຈມຕີໃນເຂດກາຊາ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

**1) ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສົ່ງໂທລະເລກອວຍພອນ ມາຍັງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ**

ເນື່ອງໃນໂອກາດ ຄົບຮອບ 50 ປີ ແຫ່ງ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ປະທານປະເທດ, ສະພາແຫ່ງຊາດ, ລັດຖະບານ, ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ໄດ້ສົ່ງໂທລະເລກອວຍພອນ ມາຍັງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ, ລັດຖະບານ, ສະພາແຫ່ງຊາດ, ຄະນະກຳມະການສູນກາງແນວລາວສ້າງຊາດ, ເຊິ່ງເນື້ອໃນຂອງໂທລະເລກອວຍພອນ ມີດັ່ງນີ້:

ຕະຫຼອດໄລຍະ 50 ປີຜ່ານມາ, ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງ ພັກປະຊາຊົນປະຕິ ວັດລາວ, ປະເທດລາວ ໄດ້ຜ່ານຜ່າບັນດາສິ່ງທ້າທາຍ, ບຸກບືນສູ້ຊົນຢ່າງໜັກແໜ້ນໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ຍາດໄດ້ບັນດາຜົນສຳເລັດອັນໃຫຍ່ຫຼວງ, ມີຄວາມໝາຍປະຫວັດສາດ ໃນທຸກຂົງເຂດ. ເສດຖະກິດ-ສັງຄົມ ພັດທະນາຢ່າງໝັ້ນທ່ຽງ, ຊີວິດການເປັນຢູ່ຂອງປະຊາຊົນນັບມື້ໄດ້ຮັບການປັບປຸງດີຂຶ້ນ, ມີຄວາມສະຫງົບທາງດ້ານການເມືອງ ແລະ ຄວາມປອດໄພໃນສັງຄົມ ໄດ້ຮັບການຮັກສາຢ່າງໝັ້ນຄົງ, ບົດບາດ ແລະ ຄວາມໄວ້ວາງໃຈຂອງລາວ ໃນເວທີສາກົນ ນັບມື້ໄດ້ຮັບການຍົກສູງ. ພິເສດ, ກອງປະຊຸມໃຫຍ່ ຄັ້ງທີ XI ຂອງ ພັກປະຊາຊົນປະຕິວັດລາວ ໄດ້ກຳນົດທິດທາງ, ເປົ້າໝາຍ ແລະ ໜ້າທີ່ການພັດທະນາປະເທດຊາດ ໃນໄລຍະໃໝ່, ກ້າວໄປສູ່ການຫຼຸດພົ້ນອອກຈາກສະພາບດ້ອຍພັດທະນາໃນປີ 2026. ພວກຂ້າພະເຈົ້າເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ປະເທດລາວອ້າຍນ້ອງ ຈະສືບຕໍ່ຍາດໄດ້ບັນດາຜົນສຳເລັດໃໝ່, ໃຫຍ່ຫຼວງກວ່າເກົ່າ, ພັກປະຊາຊົນປະຕິວັດລາວ ຈະຈັດຕັ້ງສຳເລັດກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ໃນຕົ້ນປີ 2026 ໄດ້ຢ່າງມີໄຊ; ສ້າງປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ ຕາມເປົ້າໝາຍສັງຄົມນິຍົມ ຢ່າງສຳເລັດຜົນ.

ພວກຂ້າພະເຈົ້າ ມີຄວາມປິຕິຊົມຊື່ນ ແລະ ເອກອ້າງທະນົງໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ຄຽງຄູ່ກັບບັນດາຜົນສຳເລັດອັນໃຫຍ່ຫຼວງທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຍາດມາໄດ້ຕະຫຼອດໄລຍະຜ່ານມາ, ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານຫວຽດນາມ-ລາວ, ໂດຍແມ່ນປະທານ ໂຮ່ຈິມິນ, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ໄດ້ກໍ່ຕັ້ງ ແລະ ອອກແຮງເພີ່ມພູນຄູນສ້າງນັ້ນ ນັບມື້ນັບໄດ້ຮັບການເພີ່ມທະວີ ແລະ ພັດທະນາເຂົ້າສູ່ລວງເລິກ, ແທດເໝາະກັບຕົວຈິງ ແລະ ມີປະສິດທິຜົນໃນທຸກຂົງເຂດ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງແຕ່ລະປະເທດ.

ພັກ, ລັດ ແລະ ປະຊາຊົນຫວຽດນາມ ຍາມໃດກໍໃຫ້ການສະໜັບສະໜູນຢ່າງແຮງກ້າ ແລະ ຮອບດ້ານຕໍ່ພາລະກິດປ່ຽນແປງໃໝ່ຂອງລາວ, ຖືສຳຄັນຢ່າງສະເໝີຕົ້ນສະເໝີປາຍຕໍ່ ການພົວພັນກັບລາວ ທີ່ເປັນບູລິມະສິດອັນດັບຕົ້ນໃນນະໂຍບາຍການຕ່າງປະເທດຂອງຕົນ. ບໍ່ວ່າຈະຢູ່ໃນສະຖານະການໃດໆ, ຫວຽດນາມ ກໍຈະອອກແຮງສຸດກຳລັງຂອງຕົນ ຮ່ວມກັບລາວ ເພື່ອປົກປັກຮັກສາ ແລະ ເພີ່ມພູນຄູນສ້າງ ຄວາມສາມັກຄີພິເສດ ຫວຽດນາມ - ລາວ ໃຫ້ນັບມື້ນັບພັດທະນາເຂົ້າສູ່ລວງເລິກ, ແທດເໝາະກັບຕົວຈິງ ແລະ ມີປະສິດທິຜົນໃນທຸກຂົງເຂດ ຢ່າງບໍ່ຢຸດຢັ້ງ ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ.

ອວຍພອນໃຫ້ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ຈົ່ງສວຍສົດງົດງາມ ແລະ ໝັ້ນຄົງທະນົງແກ່ນຊົ່ວກາລະນານ. ອວຍພອນໃຫ້ ບັນດາສະຫາຍການນຳ ພັກ, ລັດຖະບານ ແລະ ແນວລາວສ້າງຊາດ ຈົ່ງມີສຸຂະພາບເຂັ້ມແຂງ, ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງກວ່າເກົ່າ ໃນພາລະກິດອັນສູງສົ່ງຂອງຕົນ.

**2) ເພີ່ມທະວີສາຍພົວພັນສາມັກຄີພິເສດ ລາວ-ຫວຽດນາມ ກ້າວຂຶ້ນສູ່ລະດັບສູງໃໝ່**



ໃນວັນທີ 2 ທັນວາ 2025, ທີ່ນະຄອນຫຼວງວຽງຈັນ, ໄດ້ມີການພົບປະຂັ້ນສູງ ລະຫວ່າງ ພັກປະຊາ ຊົນປະຕິວັດ ລາວ ແລະ ພັກກອມມູນິດຫວຽດນາມ ໂດຍການເປັນປະທານຮ່ວມຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການ ໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ແລະ ສະຫາຍ ໂຕ ເລິມ,ເລຂາທິການໃຫຍ່ ຄະນະບໍລິ ຫານງານສູນກາງພັກກອມມູນິດຫວຽດນາມ, ເປັນການຢ້ຽມຢາມ ແລະ ເຮັດວຽກທ່າມກາງການສະເຫຼີມສະຫຼອງວັນ ສະຖາປະນາ ສປປ ລາວ ຄົບຮອບ 50 ປີ ແລະ ວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ.

ໃນການພົບປະຄັ້ງນີ້, ສະຫາຍເລຂາທິການໃຫຍ່ ທອງລຸນ ສີສຸລິດ ແລະ ສະຫາຍເລຂາທິການໃຫຍ່ ໂຕເລິມ ໄດ້ ແຈ້ງໃຫ້ກັນຊາບກ່ຽວກັບ ສະພາບການຂອງແຕ່ລະພັກ, ແຕ່ລະປະເທດ, ໃນນັ້ນລວມມີ ວຽກງານກໍ່ສ້າງພັກ, ການກະ ກຽມ ກອງປະຊຸມໃຫຍ່ ຂອງແຕ່ລະພັກ, ການປັບປຸງສັບຊ້ອນກົງຈັກການຈັດຕັ້ງຂອງລະບົບການເມືອງໃຫ້ກະທັດຮັດ, ການພັດທະນາເສດຖະກິດ-ສັງຄົມ, ແລກປ່ຽນກ່ຽວກັບສະພາບການພາກພື້ນ, ສາກົນ ແລະ ບັນດາເນື້ອໃນທີ່ສອງຝ່າຍ ມີຄວາມສົນໃຈ; ຕີລາຄາຄືນກ່ຽວກັບຜົນສຳເລັດຂອງການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ໃນໄລຍະຜ່ານມາ; ເປັນເອກະພາບກ່ຽວກັບບັນດາທິດທາງໃຫຍ່ສຳຄັນ ໃນບັນດາຂົງເຂດຂອງການພົວພັນຮ່ວມມື ໃນໄລຍະຕໍ່ໜ້າ.

ສອງຝ່າຍ ຢືນຢັນຕໍ່ຄວາມສຳຄັນ, ຄວາມໝາຍຍຸດທະສາດ ຂອງສາຍພົວພັນ ລາວ-ຫວຽດນາມ ແລະ ຫວຽດ ນາມ-ລາວ ໃນສະພາບການໃໝ່ - ຍຸກສະໄໝແຫ່ງການພັດທະນາ ແລະ ເຫັນດີຍົກລະດັບການພົວພັນພິເສດຂຶ້ນເປັນ **ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ, ຫວຽດນາມ - ລາວ** ໂດຍມີເປົ້າໝາຍເຊື່ອມຈອດດ້ານຍຸດທະສາດ, ນະໂຍບາຍການພັດທະນາເສດຖະ ກິດ, ພື້ນຖານໂຄງລ່າງ, ບຳລຸງສ້າງຊັບພະຍາກອນມະນຸດ ຕອບສະໜອງໃຫ້ແກ່ການພັດທະນາທີ່ຍືນຍົງຂອງແຕ່ລະປະ ເທດ, ສືບຕໍ່ຜັນຂະຫຍາຍມູນເຊື້ອອັນດີງາມ, ເພີ່ມທະວີຄວາມສາມັກຄີພິເສດ, ປະສານສົມທົບກັນຢ່າງແໜ້ນແຟ້ນ, ສະໜັບສະໜູນ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເສີມຂະຫຍາຍບັນດາກົນໄກທີ່ມີຢູ່ໃນປັດຈຸບັນ, ສ້າງບັນດາກົນໄກໃໝ່, ກົນໄກສະເພາະ ທີ່ແທດເໝາະ ເພື່ອຍົກສູງປະສິດທິຜົນຂອງການພົວພັນຮ່ວມມື ລາວ-ຫວຽດນາມ, ຫວຽດນາມ-ລາວ ແລະ ນຳມາຊຶ່ງຜົນປະໂຫຍດທີ່ແທ້ຈິງຂອງປະຊາຊົນສອງຊາດ, ເພື່ອສັນຕິພາບ, ການຮ່ວມມື ເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ສາກົນ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດປາຖະກະຖາ ວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ, ວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ແລະ ພິທີປະດັບຫຼຽນກາລະນຶກ 50 ປີ ວັນສະຖາປະນາ ສປປ ລາວ**




ໃນວັນທີ 11 ທັນວາ 2025, ຢູ່ທີ່ ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ມີການຈັດພິທີປາຖະກະຖາ ວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ (2/12/1975-2/12/2025), ວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ (13/12/1920-13/12/2025) ແລະ ພິທີປະດັບຫຼຽນກາລະນຶກ 50 ປີ ວັນສະຖາປະນາ ສປປ ລາວ. ໃຫ້ກຽດເປັນປະທານ ແລະ ປະດັບຫຼຽນ ໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ເລຂາຄະນະບໍລິຫານງານພັກ, ຫົວໜ້າ ຄຕພ; ມີ ຄະນະນໍາ, ບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະກົມ, ພະນັກງານບໍານານ ແລະ ພະນັກງານຂອງ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ທວນຄືນມູນເຊື້ອຂະບວນການປະຕິວັດ ແລະ ຄວາມໝາຍຄວາມສໍາຄັນຂອງ ວັນຊາດ ທີ 2 ທັນວາ, ເຊິ່ງແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ຂອງຊາດ, ປວງຊົນລາວທັງຊາດໄດ້ມີອິດສະຫຼະພາບ ແລະ ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ ແລະ ມີອະທິປະໄຕຢ່າງຄົບຖ້ວນ ມີຖານະເທົ່າທຽມກັບປະເທດ ອື່ນໆໃນເວທີສາກົນ ກໍຄື ໃນໂລກ; ພ້ອມທັງຍົກໃຫ້ເຫັນບັນດາເຫດການໄຊຊະນະອັນຍິ່ງໃຫຍ່, ພາລະກິດປົດປ່ອຍຊາດໃນເມື່ອກ່ອນ ກໍຄື ຜົນງານ, ຜົນສໍາເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ພາຍໃຕ້ການນໍາພາ-ຊີ້ນໍາຂອງ ພັກ, ຜົນສໍາເລັດຂອງການປະຕິບັດ 2 ໜ້າທີ່ຍຸດທະສາດ ແຕ່ອະດີດຈົນເຖິງປະຈຸບັນ. ຫຼັງຈາກນັ້ນ, ກໍໄດ້ສືບຕໍ່ເຜີຍແຜ່ການເຄື່ອນໄຫວປະຕິວັດຂອງ ປະທານ ໄກສອນ ພົມວິຫານ ໂດຍໄດ້ຍົກໃຫ້ເຫັນເຖິງຜົນງານອັນໃຫຍ່ຫຼວງ ແລະ ແບບຢ່າງອັນດີເລີດ ຂອງປະທານ ໄກສອນ ພົມວິຫານ ຜູ້ນໍາທີ່ເຄົາລົບຮັກຂອງປວງຊົນລາວທັງຊາດ ທີ່ມີຕໍ່ປະເທດຊາດ ແລະ ຮໍ່າຮຽນເອົາແບບຢ່າງອັນດີງາມ ເພື່ອໃຫ້ຄົນຮຸ່ນໃໝ່ຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນສະມາຊິກພັກທີ່ດີ, ເປັນພະນັກງານທີ່ດີເດັ່ນ ສືບທອດພາລະກິດຂອງ ພັກ ໃຫ້ຈະເລີນຮຸ່ງເຮືອງຂຶ້ນໄປເລື້ອຍໆ.

ໃນວັນດຽວກັນ, ສະຫາຍ ປອ ວາລະໄຊ ເລັ່ງສະຫວັດ, ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າ ຄຕພ ໄດ້ຂຶ້ນຜ່ານລັດຖະດໍາລັດ ຂອງ ປະທານປະເທດ ສະບັບເລກທີ 290/ປປທ, ລົງວັນທີ 20 ພະຈິກ 2025 ວ່າດ້ວຍການປະດັບຫຼຽນກາລະນຶກ 50 ປີ ວັນສະຖາປະນາ ສປປ ລາວ ແລະ ຜ່ານ ໃບມອບສິດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 247/ນຍ, ລົງວັນທີ 20 ພະຈິກ 2025, ເພື່ອປະດັບຫຼຽນກາລະນຶກ 50 ປີ ໃຫ້ ແກ່ບັນດາພະນັກງານ-ລັດຖະກອນ ປະຈໍາການ ແລະ ບໍານານ ຜູ້ທີ່ມີຜົນງານດີເດັ່ນ, ມີຄຸນງາມຄວາມດີໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະຜ່ານມາ, ເຊິ່ງຜູ້ທີ່ໄດ້ຮັບຫຼຽນທັງໝົດ ມີ 90 ສະຫາຍ, ຍິງ 23 ສະຫາຍ, ໃນນີ້ ພະນັກງານບໍານານ 34 ສະຫາຍ, ຍິງ 10 ສະຫາຍ.

**2) ສະຫາຍ ເລ ຮວ່າຍ ຈຸງ, ເລຂາທິການສູນກາງພັກ, ເລຂາຄະນະພັກ ກະຊວງການຕ່າງປະເທດຫວຽດນາມ ສົ່ງໂທລະເລກອວຍພອນ ເນື່ອງໃນໂອກາດວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ**

ໃນວັນທີ 01 ທັນວາ 2025, ສະຫາຍ ເລ ຮວ່າຍ ຈຸງ, ເລຂາທິການສູນກາງພັກ, ເລຂາຄະນະພັກ ກະຊວງການຕ່າງປະເທດຫວຽດນາມ ຕາງໜ້າໃຫ້ ຄະນະນຳ ແລະ ພະນັກງານ-ລັດຖະກອນ ຂອງ ກະຊວງການຕ່າງປະເທດຫວຽດນາມ ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ພ້ອມດ້ວຍ ບັນດາສະຫາຍຄະນະນຳ, ພະນັກງານ ແລະ ສະມາຊິກພັກຂອງ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ (2 ທັນວາ 1975 - 2 ທັນວາ 2025), ເຊິ່ງມີເນື້ອໃນໂທລະເລກອວຍພອນດັ່ງນີ້:

ຕະຫຼອດໄລຍະ 50 ປີ ທີ່ຜ່ານມາ, ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງ ພັກປະຊາຊົນປະຕິວັດລາວ, ປະເທດ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ບັນລຸບັນດາຜົນສຳເລັດອັນໃຫຍ່ຫຼວງ, ມີຄວາມໝາຍປະຫວັດສາດໃນເສັ້ນທາງແຫ່ງການສ້າງສາ ແລະ ປົກປັກຮັກສາປະເທດຊາດ ເຊິ່ງມີຄວາມສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ເສດຖະກິດ-ສັງຄົມໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ, ຖານະບົດບາດ ແລະ ອິດທິພົນຊື່ສຽງຂອງປະເທດລາວ ນັບມື້ນັບໄດ້ຮັບການຍົກສູງໃນເວທີສາກົນ. ນີ້ແມ່ນການພິສູດຢ່າງມີຊີວິດຊີວາ ໃຫ້ເຫັນເຖິງແນວທາງການປ່ຽນແປງໃໝ່ທີ່ຖືກຕ້ອງ, ຄວາມສາມັກຄີເອກະພາບຢ່າງສູງໃນ ທົ່ວພັກ, ທົ່ວປວງຊົນ ແລະ ທົ່ວກອງທັບລາວ.

ຂ້າພະເຈົ້າ ຫວັງວ່າ ຈະສືບຕໍ່ຮ່ວມມືຢ່າງແໜ້ນແຟ້ນກັບ ສະຫາຍ ແລະ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ເພື່ອຮ່ວມປະກອບສ່ວນເຂົ້າໃນການພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ຫວຽດນາມ-ລາວ, ລາວ-ຫວຽດນາມ ກໍຄື ເພີ່ມທະວີການຮ່ວມມືລະຫວ່າງ ອົງຄະນະພັກ ກະຊວງການຕ່າງປະເທດ ແຫ່ງ ສສ ຫວຽດນາມ ແລະ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ຢ່າງມີປະສິດທິຜົນສູງກວ່າເກົ່າ.

ອີກເທື່ອໜຶ່ງ, ຂໍສົ່ງຄຳອວຍພອນໄຊອັນປະເສີດ ມາຍັງ ສະຫາຍ ແລະ ພະນັກງານ, ສະມາຊິກພັກຂອງ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ທຸກຖ້ວນໜ້າ ແລະ ຂໍອວຍພອນໃຫ້ ສະຫາຍ ຈົ່ງມີສຸຂະພາບເຂັ້ມແຂງ, ຄອບຄົວມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນວຽກງານທຸກປະການ.

**3) ຄະນະຜູ້ແທນພັກກອມມູນິດຈີນ ມາຢ້ຽມຢາມ ແລະ ປາຖະກະຖາ ຢູ່ ສປປ ລາວ**



ໃນລະຫວ່າງວັນທີ 23-26 ທັນວາ 2025, ຄະນະຜູ້ແທນພັກກອມມູນິດຈີນ ນຳໂດຍ ສະຫາຍ ເຊ້ຍ ຊຸນທາວ, ກຳມະການສູນກາງພັກ, ຮອງຫົວໜ້າ, ຜູ້ປະຈຳການ ໂຮງຮຽນພັກ ຂອງ ສູນກາງພັກກອມມູນິດຈີນ (ສະຖາບັນການປົກຄອງແຫ່ງຊາດ) ໄດ້ເດີນທາງມາຢ້ຽມຢາມ ສປປ ລາວ ຕາມແຜນການຮ່ວມມື ລະຫວ່າງ ສອງພັກ ລາວ-ຈີນ ປະຈຳປີ 2025 ເພື່ອຊຸກຍູ້ການພົວພັນຮ່ວມມື ແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ສືບຕໍ່ກ້າວສູ່ລວງເລິກ ແລະ ເຜີຍແຜ່ ຜົນສຳເລັດກອງປະຊຸມຄົບຄະນະ ຄັ້ງທີ 4 ສະໄໝທີ XX ຂອງພັກກອມມູນິດຈີນ ທີ່ໄດ້ດຳເນີນໃນເດືອນຕຸລາ ຜ່ານມາ.

ໃນໄລຍະຢ້ຽມຢາມຄັ້ງນີ້, ຄະນະໄດ້ເຂົ້າຢ້ຽມຂ່ຳນັບ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ຢູ່ ຫ້ອງວ່າການສູນກາງພັກ ໃນຕອນເຊົ້າຂອງວັນທີ 24 ທັນວາ 2025, ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມຊົມເຊີຍ ຕໍ່ການມາເຄື່ອນໄຫວຢ້ຽມຢາມ ແລະ ປາຖະກະຖາ ຢູ່ ສປປ ລາວ ຂອງຄະນະໃນຄັ້ງນີ້, ຕີລາຄາສູງ

ຕໍ່ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ, ໂດຍສະເພາະແມ່ນ ການຈັດຕັ້ງປະຕິບັດ ແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ກໍຄື ບັນດາແຜນການຮ່ວມມື ລະຫວ່າງ ສອງພັກ ປະຈຳປີ 2025 ແລະ ຍິນດີ ຊຸກຍູ້ໃຫ້ຂະແໜງການທີ່ກ່ຽວຂ້ອງ ສືບຕໍ່ຮ່ວມກັບຝ່າຍຈີນ ຈັດຕັ້ງຜັນຂະຫຍາຍຄວາມຮັບຮູ້ທີ່ເປັນເອກະພາບ ລະຫວ່າງ ການນຳສູງສຸດຂອງສອງພັກ, ສອງລັດ ລາວ-ຈີນ; ສືບຕໍ່ຮັກສາການໄປມາຫາສູ່ກັນຢ່າງເປັນປົກກະຕິ, ແລກປ່ຽນບົດຮຽນໃນການຄຸ້ມຄອງພັກ-ບໍລິຫານປະເທດ, ການກໍ່ສ້າງພັກ-ພະນັກງານ ແລະ ການຊຸກຍູ້ເພີ່ມທະວີແລກປ່ຽນດ້ານວັດທະນະທຳ-ສັງຄົມ ແລະ ການໄປມາຫາສູ່ກັນລະຫວ່າງປະຊາຊົນສອງຊາດ ລາວ-ຈີນ; ຕີລາຄາສູງຕໍ່ ການປາຖະກະຖາ ຂອງ ສະຫາຍ ເຊ໋ຍ ຊຸນທາວ, ເຊິ່ງເນື້ອໃນຈິດໃຈ ຂອງ ກອງປະຊຸມຄົບຄະນະ ເທື່ອທີ 4 ສະໄໝທີ XX ຂອງພັກກອມມູນິດຈີນ ກໍຄື ບົດຮຽນຂອງພັກ-ລັດຈີນ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຖືເປັນບົດຮຽນອັນລ້ຳຄ່າ ຕໍ່ ການວາງແຜນ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງລາວ, ຈະເປັນໂອກາດດີໃຫ້ຝ່າຍລາວ ກຳໄດ້ເນື້ອໃນສຳຄັນຂອງກອງປະຊຸມດັ່ງກ່າວ ແລະ ນຳມາໝູນໃຊ້ເຂົ້າໃນວຽກງານຕົວຈິງ.

ໃນວັນດຽວກັນ, ສະຫາຍ ເຊ໋ຍ ຊຸນທາວ ຍັງໄດ້ພົບປະຮັດວຽກກັບ ສະຫາຍ ຮສ ປອ ພູວົງ ອຸ່ນຄຳແສນ, ກຳມະການສູນກາງພັກ, ຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ສະຫາຍ ລາວປາວຊົ່ງ ນະວົງໄຊ, ກຳມະການສູນກາງພັກ, ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເພື່ອລົງເລິກແລກປ່ຽນຄຳຄິດເຫັນ ກ່ຽວກັບ ການພົວພັນຮ່ວມມືສອງຝ່າຍອີກດ້ວຍ. ຄະນະ ຍັງຈະໄດ້ປາຖະກະຖາ ຜົນສຳເລັດຂອງກອງປະຊຸມຄົບຄະນະເທື່ອທີ 4 ສະໄໝທີ XX ຂອງພັກກອມມູນິດຈີນ ຢູ່ ຫ້ອງປະຊຸມໃຫຍ່ ຂອງ ຫ້ອງວ່າການສູນກາງພັກ ແລະ ໄປຢ້ຽມຢາມແຂວງຫຼວງພະບາງ ໂດຍຈະໄດ້ພົບປະກັບ ການນຳແຂວງ ແລະ ປາຖະກະຖາ ຢູ່ ແຂວງຫຼວງພະບາງ ຕື່ມອີກ.

**4) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບເອກອັກຄະລັດຖະທູດ ເບລາຣຸດຊີ**



ໃນຕອນເຊົ້າຂອງວັນທີ 03 ທັນວາ 2025, ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ອູລັດຊິມີຣ ບາຣາວິກູ (Uladzimir Baravikou), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ເບລາຣຸດຊີ ປະຈຳ ສປປ ລາວ ທີ່ມີສຳນັກງານຕັ້ງຢູ່ ນະຄອນຫຼວງຮ່າໂນ້ຍ, ສສ.ຫວຽດນາມ.

ໃນໂອກາດນີ້, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ ການເດີນທາງມາເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ ຂອງທ່ານທູດ, ຊຶ່ງເປັນການສະແດງໃຫ້ເຫັນເຖິງສາຍພົວພັນອັນໃກ້ຊິດ ລະຫວ່າງ ສອງປະເທດ. ໃນການພົບປະ, ທ່ານຫົວໜ້າ ຄຕພ ໄດ້ແຈ້ງໃຫ້ທ່ານທູດ ຊາບໂດຍສັງເຂບກ່ຽວກັບ ສະພາບລວມຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການກະກຽມໃຫ້ແກ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງ ພັກ ປປ ລາວ ໃນຕົ້ນປີ 2026 ທີ່ຈະມາເຖິງນີ້. ພ້ອມດຽວກັນນີ້, ຍັງສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ການຊ່ວຍເຫຼືອອັນລ້ຳຄ່າຂອງ ລັດຖະບານ ແລະ ປະຊາຊົນ ເບລາຣຸດຊີ ທີ່ມີຕໍ່ປະຊາຊົນລາວ ຕະຫຼອດໄລຍະຜ່ານມາ ໂດຍສະເພາະດ້ານການສຶກສາ ກໍຄື ການສະໜັບສະໜູນ-ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວທີສາກົນ. ທ່ານ ບຸນເຫຼືອ ພັນດານຸວົງ ຍັງໄດ້ແລກປ່ຽນຄຳເຫັນກັບ ທ່ານທູດ ເພື່ອຊອກຫາຊ່ອງທາງສົ່ງເສີມການພົວພັນຮ່ວມມືໃນຂົງເຂດຕ່າງໆ ເປັນຕົ້ນແມ່ນ ການກະກຽມຄວາມພ້ອມໃຫ້ແກ່ການນຳຂັ້ນສູງຂອງສອງປະເທດ ເຄື່ອນໄຫວຢ້ຽມຢາມເຊິ່ງກັນ ແລະ ກັນ ໃນອະນາຄົດອັນໃກ້ນີ້, ການພົວພັນດ້ານພັກ, ການທູດປະຊາຊົນ ກໍ

ຄື ການເພີ່ມທະວີການໄປມາຫາສູ່ ລະຫວ່າງ ປະຊາຊົນສອງຊາດ, ນັກທຸລະກິດຂອງສອງປະເທດ ແລະ ດ້ານອື່ນໆ ທີ່ເຫັນວ່າມີຜົນປະໂຫຍດຮ່ວມກັນ ໃຫ້ມີບາດກ້າວໃໝ່ ແລະ ຂະຫຍາຍຕົວຍິ່ງຂຶ້ນ.

ທ່ານ ອູລັດຊີມີຣ ບາຣາວີກູ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນຂອງ ພັກ, ລັດ ແລະ ປະຊາຊົນລາວ ກໍຄືຂອງ ຫົວໜ້າ ຄຕພ ແລະ ຊົມເຊີຍເປັນຢ່າງສູງຕໍ່ຜົນສຳເລັດອັນຈົບງາມ ຂອງພິທີສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ, ຊຶ່ງເປັນເຫດການປະຫວັດສາດຄັ້ງສຳຄັນທີ່ສະທ້ອນໃຫ້ເຫັນເຖິງ ຄວາມເຂັ້ມແຂງຂອງ ສປປ ລາວ ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ-ປະຊາຊົນ ຢ່າງແທ້ຈິງ; ພ້ອມນີ້, ຍັງເຫັນດີໃຫ້ມີການຊຸກຍູ້ຢ່າງແຂງແຮງຮອບດ້ານເຂົ້າໃນການພົວພັນຮ່ວມມື ລາວ-ເບລາຣຸດຊີ ໃນໄລຍະໃໝ່, ລວມທັງການຮ່ວມມື ທາງດ້ານການຄ້າ-ການລົງທຶນ, ການທ່ອງທ່ຽວ ແລະ ວັດທະນະທຳ-ສັງຄົມ, ພ້ອມທັງຢືນຢັນທີ່ຈະສືບຕໍ່ເຮັດສຸດຄວາມສາມາດໃນການເປັນຂົວຕໍ່ປະກອບສ່ວນເຂົ້າໃນການການພົວພັນດ້ານພັກ, ການທູດປະຊາຊົນ, ອົງການຈັດຕັ້ງແມ່ຍິງ ແລະ ອົງການຈັດຕັ້ງຊາວໜຸ່ມ ທີ່ສອງຝ່າຍມີຄວາມສົນໃຈ ແລະ ມີທ່າແຮງຮ່ວມກັນ. ພ້ອມດຽວກັນນີ້, ທ່ານທູດ ຍັງໄດ້ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຂອງ ສປປ ລາວ ທີ່ມີຕໍ່ ສ.ເບລາຣຸດຊີ ໃນເວທີພາກພື້ນ ແລະ ສາກົນ. ໃນໂອກາດນີ້, ທ່ານທູດ ຍັງໄດ້ມອບສານຊົມເຊີຍ ຂອງ ພັກເບລາຢາຣຸດສ໌, ຊຶ່ງເປັນພັກກຳອຳນາດຂອງເບລາຣຸດຊີ ເຖິງ ພັກປະຊາຊົນປະຕິວັດລາວ ເນື່ອງໃນໂອກາດວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ.

## IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ

**1) ສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຂັ້ນສູນກາງ ພົບປະສອງຝ່າຍ**



ເພື່ອຕອບສະໜອງຕາມການເຊື້ອເຊີນຂອງ ທ່ານປະທານ ສະມາຄົມມິດຕະພາບ ລາວ-ຫວຽດນາມ ຂັ້ນສູນກາງ, ໃນວັນທີ 1 ທັນວາ 2025 ທີ່ສະພາແຫ່ງຊາດ ໄດ້ມີພິທີພົບປະແລກປ່ຽນບົດຮຽນ ລະຫວ່າງ ສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຂັ້ນສູນກາງ ເຊິ່ງຝ່າຍລາວ ນໍາໂດຍ ສະຫາຍ ບັນດິດ ສຈ. ບໍ່ວຽງຄໍາ ວົງດາລາ, ກໍາມະການສູນກາງພັກ, ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ປະທານສະມາຄົມມິດຕະພາບ ລາວ-ຫວຽດນາມ ຂັ້ນສູນກາງ; ຝ່າຍຫວຽດນາມ ນໍາໂດຍ ສະຫາຍ ຫງວຽນ ດັກ ວິງ, ກໍາມະການສູນກາງພັກ, ຄະນະປະຈໍາສະພາແຫ່ງຊາດ, ປະທານກໍາມາທິການວັດທະນະທໍາ-ສັງຄົມ, ສະພາແຫ່ງຊາດຫວຽດນາມ, ປະທານສະມາຄົມມິດຕະພາບ ຫວຽດນາມ-ລາວ ຂັ້ນສູນກາງ.

ໃນໂອກາດນີ້, ສະຫາຍ ບັນດິດ ສຈ. ບໍ່ວຽງຄໍາ ວົງດາລາ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງ ຄະນະຜູ້ແທນສະມາຄົມມິດຕະພາບ ຫວຽດນາມ-ລາວ ຂັ້ນສູນກາງ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນສໍາຄັນເຂົ້າໃນການ ເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກເວົ້າລວມ, ເວົ້າສະເພາະ ກໍ່ແມ່ນການຮ່ວມມືແລກປ່ຽນຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ ລະຫວ່າງສອງສະມາຄົມມິດຕະພາບ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຂັ້ນສູນກາງ ໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນ.

**2) ຄະນະຜູ້ແທນ ຄະນະສັນຕິພາບ ຫວຽດນາມ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ**



ໂດຍຕອບສະໜອງຕາມຄໍາເຊີນຂອງຄະນະສັນຕິພາບແລະສາມັກຄີ ຂອງລາວ, ຄະນະຜູ້ແທນຄະນະສັນຕິພາບ ຫວຽດນາມ ນໍາໂດຍ ສະຫາຍ ອວງ ຈູລືວ, ອາດີດກໍາມະການສູນກາງພັກ, ອາດີດຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ຫວຽດນາມ ໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ລະຫວ່າງວັນທີ 8-11 ທັນວາ 2025.

ວັນທີ 9 ທັນວາ 2025, ຄະນະຜູ້ແທນສັນຕິພາບ ຫວຽດນາມ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ບຸນທອງ ຈິດມະນີ, ກໍາມະການກົມການເມືອງສູນກາງພັກພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ. ສະຫາຍ ບຸນທອງ ຈິດມະນີ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວຂອງຄະນະຜູ້ແທນຄະນະສັນຕິພາບ ຫວຽດນາມ ຖືເປັນການປະກອບສໍາຄັນສ່ວນເຂົ້າ ໃນການ ເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນ ລາວ-ຫວຽດນາມ. ສອງຝ່າຍ ໄດ້ຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດ ລາວ-ຫວຽດນາມ ທີ່ນັບມື້ໄດ້ຮັບການເສີມຂະຫຍາຍທັງທາງກ້ວາງ ແລະ ລວງເລິກ ແລະ ນໍາເອົາຜົນປະ ໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ. ພ້ອມນັ້ນ, ຍັງໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງ ຄະນະສັນຕິ ພາບສອງຝ່າຍ ທີ່ມີກົນໄກການພົວພັນຮ່ວມມື, ປະສານງານ, ຖອດຖອນບົດຮຽນນໍາກັນ, ແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນທັດສະນະ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນໃນ ໃນເວທີພາກພື້ນ ແລະ ສາກົນ, ເຊິ່ງເປັນການປະກອບສ່ວນສ້າງສະພາບແວດລ້ອມໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ໃນພາກພື້ນ ແລະ ສາກົນ. ສ່ວນ ສະຫາຍ ອອງຈູລື໋ວ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ  ແຈ້ງໃຫ້ຊາບຈຸດປະສົງຂອງ ການມາຢ້ຽມຢາມ ສປປ ລາວ ແລະ ການເຄື່ອນໄຫວໂດຍຫຍໍ້ ຂອງ ຄະນະສັນຕິພາບ ຫວຽດນາມ.

ໃນວັນດຽວກັນ ໄດ້ມີກອງປະຊຸມພົບປະສອງຝ່າຍ ລະຫວ່າງ ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ຄະນະສັນຕິພາບຫວຽດນາມ. ຝ່າຍລາວ ນໍາໂດຍ ສະຫາຍ ສິມມາດ ພົລເສນາ, ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ຝ່າຍ ຫວຽດນາມ ນໍາໂດຍ ສະຫາຍ ອອງຈູລື໋ວ, ອະດີດກໍາມະການສູນກາງພັກ, ອະດີດຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ຫວຽດນາມ. ໃນກອງປະຊຸມ, ສອງຝ່າຍ ໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ, ປຶກສາຫາລື, ແລກປ່ຽນບົດຮຽນ, ປະສົບການໃນການເຄື່ອນໄຫວວຽກງານສັນຕິພາບ ພ້ອມທັງແລກປ່ຽນຂໍ້ມູນ ແລະ ທັດສະນະ ກ່ຽວກັບສະພາບການພົ້ນເດັ່ນຂອງພາກພື້ນ ແລະ ຂອງໂລກ ທີ່ສອງຝ່າຍສົນໃຈ ເຮັດໃຫ້ການພົບປະມີເນື້ອໃນອຸດົມ ສົມບູນ ແລະ ມີບັນຍາກາດ.